# ບົດລາຍງານ

## ກອງປະຊຸມປຶກສາຫາລືກັບບັນດາພາກສ່ວນ
## ທີ່ກ່ຽວຂ້ອງ ໃນຂະແໜງອຸດສະຫະກໍາໂຮງງານແປຮູບໄມ້ປ່ອງ ທີ່ຂື້ນກັບເມືອງວຽງໄຊ ແຂວງຫົວພັນ.

ທີ່ ຊັ້ນ4 ຂອງ ພະແນກການເງິນ, ເມືອງຊຳເໜືອ, ແຂວງຫົວພັນ ຄັ້ງວັນທີ 20 ມີນາ 2012



©2012, All Rights Reserved

ຂຽນໂດຍ:
ສົມພອນ ເຮືອງວົງສາ, ວິຊາການ ພະແນກແຜນການ ແລະ ການລົງທືນ
ເພັດສຸລະພົນ ຈຸລະຖິດາ, ທີ່ປຶກສາ ດ້ານພັດທະນາ ແຜນຍຸດທະສາດ ແລະ ນະໂຍບາຍ

23 ມີນາ 2012

ໂຄງການ ພັດທະນາໄມ້ປ່ອງ ແຂວງຫົວພັນ
Bamboo Sector Development Project, Houaphanh Province

## ສາລະບານ


1. ຄວາມເປັນມາ ........ 3
2. ພາກສະເໜີ ........ 4
3. ຈຸດປະສົງຂອງການປະຊຸມ ........ 5
4. ບັນດາພະແນກການ ແລະ ກົມກອງທີ່ເຂົ້າຮ່ວມ ........ 5
5. ການດຳເນີນກອງປະຊຸມໂດຍລວມ ........ 6
6. ຂະບວນການ ແລະ ວິທີດຳເນີນກອງປະຊຸມໂດຍລະອຽດ ........ 7
7. ຜົນໄດ້ຮັບຂອງການປະຊຸມປຶກສາຫາລື ........ 8
   7.1. ທິດທາງແກ້ໄຂ ເພື່ອສະໜອງໄມ້ປ່ອງໃຫ້ໂຮງງານໃຫ້ພຽງພໍ ........ 8
   7.2. ທິດທາງແກ້ໄຂ ເພື່ອປັບປຸງລາຄາຊື້ຂາຍໃຫ້ຊາວບ້ານ ........ 9
   7.3. ການພັດທະນາ ນະໂຍບາຍຫຼຸດຜ່ອນອາກອນໂກຕ້າໄມ້ປ່ອງ ........ 9
8. ບົດສະຫຼຸບຫຍໍ້ ........ 9
9. ຂໍ້ສະເໜີ ........ 10
10. ບົດຮຽນທີ່ຖອດຖອນໄດ້ ........ 10

## 1. ຄວາມເປັນມາ

ຂະແໜງການ ພັດທະນາໄມ້ປ່ອງ ຂອງແຂວງຫົວພັນ ແມ່ນກຳລັງລິເລີ່ມການຫັນທິດຈາກການຜະລິດແບບດັ້ງເດີມ ໃຫ້ກ້າວໄປສູ່ ການຜະລິດແບບອຸດສະຫະກຳຂະໜາດນ້ອຍ ແລະ ການຄ້າ. ນັບຕັ້ງແຕ່ຊຸມປີ 2007 ໂຮງງານຜະລິດຝຸ່ນເຈັ້ຍ ຢູ່ເມືອງສົບເບົາ ແມ່ນໄດ້ດຳເນີນການຜະລິດແປຮູບໄມ້ປ່ອງທຸກຊະນິດ ເພື່ອຜະລິດເປັນຝຸ່ນເຈັ້ຍອັດແໜ້ນ ແລ້ວສົ່ງອອກໄປປະເທດເພື່ອນບ້ານ ຫວຽດນາມ ແລະ ຈີນ ເພື່ອຜະລິດເປັນເຈັ້ຍຈູດໄຫວ້ຕາມສາສະໜາພຸດ, ໂຮງງານຝຸ່ນເຈັ້ຍດັ່ງກ່າວ ຖືວ່າເປັນໂຮງງານບຸກເບີກແຫ່ງທຳອິດຂອງອຸດສະຫະກຳໄມ້ປ່ອງແຂວງຫົວພັນ ແຕ່ວ່າ ລະບົບລະບາຍນ້ຳເສຍ ຍັງເປັນຂໍ້ທີ່ຈະຕ້ອງໄດ້ປະເມີນເພີ່ມຕື່ມອີກ. ໃນທ້າຍປີ 2008, ໂຮງງານແປຮູບໄມ້ປ່ອງສຸພາພອນ-ແຫ້ງ ແຫ່ງທີ່ສອງແມ່ນໄດ້ເຂົ້າມາລົງທຶນຢູ່ເມືອງວຽງໄຊ ໂດຍການຖືຫຸ້ນຮ່ວມກັນລະຫວ່າງນັກທຸລະກິດລາວ ແລະຫວຽດນາມ. ຈາກນັ້ນ, ໂຮງງານດັ່ງກ່າວແມ່ນສາມາດດຳເນີນກິດຈະການໄດ້ພຽງແຕ່ປີດຽວ ກໍ່ປິດກິດຈະການລົງໃນທ້າຍປີ 2009 ອັນເນື່ອງມາຈາກ ຂາດວັດຖຸດິບ ແລະ ສະກຸນເງິນກີບລາວແຂງຕົວສູງກວ່າເງິນດົ້ງຫວຽດນາມ. ມາໃນປະຈຸບັນ, ໂຮງງານດັ່ງກ່າວມີແຜນຈະຟື້ນກິດຈະການຄືນໃໝ່.

ໃນຖັດປີຕໍ່ມາ, ໂຮງງານແປຮູບໄມ້ປ່ອງ ເລມິນເຈົາ ແລະ ວົງທອນພ້ອມດ້ວຍເລຊວານແຫ້ງ ກໍ່ໄດ້ໃຫ້ຄວາມສົນໃຈໃນທຸລະກິດໄມ້ປ່ອງ ເຊິ່ງສອງໂຮງງານດັ່ງກ່າວແມ່ນໄດ້ເຄື່ອນໄຫວການຜະລິດໃນປີ 2009 (ເລມິນເຈົາ) ແລະ 2010 (ວົງທອນ ແລະ ເລຊວານແຫ້ງ). ໂດຍສ່ວນໃຫຍ່, ສອງໂຮງງານດັ່ງກ່າວແມ່ນຜະລິດໄມ້ ໜານຄົ້ວ, ໄມ້ກ້ານທູບ, ໄມ້ທູ່, ໄມ້ສຽບເອັນ ແລະ ໄມ້ຈີ້ມແຂ້ວ. ຜະລິດຕະພັນເຄິ່ງສຳເລັດຮູບແມ່ນຂາຍສົ່ງໄປຫວຽດນາມໂດຍກົງ. ແຕ່ໜ້າເສຍດາຍ, ໃນຕົ້ນປີ 2012 ໂຮງງານແປຮູບວົງທອນ ພົບວິກິດການ ຂາດວັດຖຸດິບປ້ອນໂຮງງານ ເນື່ອງຈາກຊາວບ້ານບໍ່ສາມາດຕັດໃຫ້ໄດ້ ແລະ ໂຮງງານດັ່ງກ່າວມີແນວໂນ້ມຈະປິດກິດຈະການ ເຊິ່ງມູນຄ່າມະຫາສານໃນການລົງທຶນສ້າງທາງເຂົ້າໄປຫາປ່າໄມ້ປ່ອງ.

ແຕ່ໃນປະຈຸບັນນີ້, ຍັງເຫຼືອພຽງແຕ່ ໂຮງງານແປຮູບໄມ້ປ່ອງເລມິນເຈົາ ທີ່ພະຍາຍາມສືບຕໍ່ ໃຫ້ຜ່ານຜ່າວິກິດການ ແຕ່ກໍ່ບໍ່ສາມາດຄາດການໄດ້ວ່າ ໂຮງງານເລມິນເຈົາຈະປິດກິດຈະການເມື່ອໃດ ຖ້າຫາກສາມບັນຫາຫາກບໍ່ຖືກແກ້ຄື: 1. ຂາດວັດຖຸດິບປ້ອນໂຮງງານ ຍ້ອນຊາວບ້ານບໍ່ຕັດໄມ້ປ້ອນໂຮງງານ; 2. ລາຄາຊື້ຂາຍໃຫ້ມີຄວາມເປັນທຳຕໍ່ຊາວບ້ານ; 3. ນະໂຍບາຍການຫຼຸດຜ່ອນອາກອນໂກຕ້າຖືກອະນຸມັດ ແລະ ຮັບຮອງ ເພື່ອສ້າງແຮງຈູງໃຈ ດຶງດູດເອົານັກລົງທຶນ.

ຕາຕະລາງ. 1 ບັນດາໂຮງງານແປຮູບໄມ້ປ່ອງ ຢູ່ແຂວງຫົວພັນ

| ຊື່ໂຮງງານ | ປະເພດທຸລະກິດ | % ການຖືຫຸ້ນ | ສະຖານທີ່ | ຕ່ອງໂສ້ຜະລິດຕະພັນ | ຊະນິດໄມ້ປ່ອງ | ລາຍລະອຽດຕິດຕໍ່ |
|---|---|---|---|---|---|---|
| ວົງທອນ ແລະ ເລຊວານແຫ້ງ | ໂຮງງານແປຮູບໄມ້ປ່ອງ ເລຊວານແຫ້ງ | ທຶນສົມທົບລະຫວ່າງນັກທຸລະກິດລາວ-ຫວຽດ | ບ້ານພູນກາງ, ເມືອງວຽງໄຊ | ໄມ້ໜານ, ໄມ້ຄົ້ວ, ໄມ້ກ້ານທູບ, ໄມ້ຈີ້ມແຂ້ວ | ໄມ້ກວັນ, ໄມ້ເຮັ້ຍ | ໂທ.+856 (030)5161347 +856(020) 98364009 |
| ເລມິນເຈົາ | ໂຮງງານແປຮູບ | 100% ຖືຫຸ້ນ | ບ້ານເດີຍ, | ໄມ້ຄົ້ວ, ນານ | ໄມ້ກວັນ, | ໂທ.+856 |

| | | | | | | |
|---|---|---|---|---|---|---|
| | ໄມ້ປ່ອງ ເລມິນ ເຈົາ | ໂດຍ ຄົນຫວຽດ | ເມືອງວຽງໄຊ | ໄມ້ກ້ານທູບ, ໄມ້ຈິມແຂ້ວ, ໄມ້ສຽບເອັນ | ໄມ້ລວງ, ໄມ້ເຮັ້ຍ | (020)23484603 |
| ສຸພາພອນ ແລະ ແທ້ງ | ໂຮງງານແປຮູບ ໄມ້ປ່ອງ ສຸພາ ພອນ | ທຶນສົມທົບ ລະຫວ່າງ ນັກທຸລະກິດລາວ-ຫວຽດ | ບ້ານວັງໄຮ່, ເມືອງວຽງໄຊ | ໄມ້ກ້ານທູບ, ໄມ້ຈິມແຂ້ວ, ໄມ້ສຽບເອັນ, ໄມ້ທູ່ | ໄມ້ກວັນ, ໄມ້ເຮັ້ຍ | ໂທ.+856 (020)55665017 +856(064)312315 |
| ລວງ | ໂຮງງານຝຸ່ນ ເຈັ້ຍສົບເບົາ | 100% ນັກທຸລະ ກິດຫວຽດນາມ ຖື ຫຸ້ນ | ບ້ານເມືອງ ຮົ່ມ, ເມືອງ ວຽງໄຊ | ຝຸ່ນເຈັ້ຍ | ທຸກຊະນິດໄມ້ | ໂທ.+84 931 204 674 |

(ແຫຼ່ງຂໍ້ມູນ: SNV, 2012)

## 2. ພາກສະເໜີ

ເພື່ອໃຫ້ການສະໜັບສະໜູນວຽກງານພັດທະນາການເພີ້ມມູນຄ່າຕາມກົນໄກການຕະຫຼາດ ໄມ້ປ່ອງ ພ້ອມທັງສ້າງ, ພັດທະນາ ແລະ ຊຸກຍູ້ໃຫ້ມີນະໂຍບາຍທີ່ເອື້ອອຳນວຍໃຫ້ແກ່ການພັດທະນາທຸລະກິດ ໄມ້ປ່ອງ ຢູ່ແຂວງຫົວພັນ ໂດຍເອົາຊຸມຊົນເປັນບ່ອນອີງ. ປະເດັນທີ່ຈະຕ້ອງໄດ້ອົາໃຈໃສ່ກໍ່ຄື: ການສ້າງຄວາມໝັ້ນໃຈໃຫ້ພາກທຸລະກິດຂັ້ນທ້ອງຖິ່ນ ໃຫ້ດຳເນີນການຜະລິດແປຮູບໄມ້ປ່ອງຈາກເຄິ່ງສຳເລັດຮູບ ໃຫ້ກ້າວໄປເຖິງ ການເປັນຜະລິດຕະພັນສຸດທ້າຍ " ສຳເລັດຮູບ " ແລະ ຜົນປະໂຫຍດ ແມ່ນກະຈາຍຢ່າງທົ່ວເຖິງ ນັ້ນກໍ່ຄື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ປະຊາຊົນມີລາຍຮັບເພີ່ມຂຶ້ນ ແລະ ມີອາຊີບໝັ້ນຄົງ, ພາກທຸລະກິດ ມີຜົນກຳໄລ ແລະ ພາກລັດ ມີແຫຼ່ງລາຍໄດ້ເຂົ້າສູ່ຄັງແຫ່ງຊາດ ໂດຍຜ່ານການຄຸ້ມຄອງນຳໃຊ້ຊັບພະຍາກອນໄມ້ປ່ອງທຳມະຊາດແບບຍືນຍົງ. ຕະຫຼອດໄລຍະ 6 ປີຜ່ານມາ, ໂຮງງານແປຮູບໄມ້ປ່ອງ ແມ່ນຜະລິດບໍ່ເຕັມເມັດເຕັມໜ່ວຍ ອັນເນື່ອງມາຈາກ ຂາດວັດຖຸດິບປ້ອນໂຮງງານ ແລະ ປະຈຸບັນ ມີແນວໂນ້ມເຫຼືອພຽງໂຮງງານດຽວ ທີ່ສືບຕໍ່ຜະລິດ ແລະ ກໍ່ອາດຈະປິດ ຖ້າພົບບັນຫາຂາດວັດຖຸດິບປ້ອນໂຮງງານຄ້າຍຄືກັບແຫ່ງອື່ນໆ.

ດ້ວຍເຫດນີ້, ພະແນກ ແຜນການ ແລະ ການລົງທຶນ ໃນນາມຂອງ ຄະນະຊີ້ນຳໂຄງການ ພັດທະນາໄມ້ປ່ອງ ແຂວງຫົວພັນ ຮ່ວມກັບອຳນາດການປົກຄອງເມືອງວຽງໄຊ ພ້ອມກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ຈຶ່ງໄດ້ຈັດກອງປະຊຸມປຶກສາຫາລື ກັບບັນດາພາກສ່ວນທີ່ກ່ຽວຂ້ອງນີ້ຂຶ້ນ ເພື່ອຜັນຂະຫຍາຍຍຸດທະສາດຂອງໂຄງການພັດທະນາໄມ້ປ່ອງ ແຂວງຫົວພັນ ແລະ ກິດຈະກຳຫຼັກຂອງກອງປະຊຸມດັ່ງກ່າວນີ້ ແມ່ນເພື່ອ ນຳສະເໜີບົດສຶກສາຄົ້ນຄວ້າ ກ່ຽວກັບ ໂຮງງານແປຮູບໄມ້ປ່ອງຢູ່ເມືອງວຽງໄຊ ແລະ ສົບເບົາ, ແຂວງຫົວພັນ ເພື່ອຍົກເອົາຂໍ້ພົບເຫັນມາປຶກສາຫາລື ແລະ ກຳນົດແນວທາງໃນການຈັດຕັ້ງປະຕິບັດຮ່ວມກັນ. ກອງປະຊຸມດັ່ງກ່າວແມ່ນ ໄດ້ໄຂຂຶ້ນຢ່າງເປັນທາງການ ໃນເວລາ 8 ໂມງ 30 ນາທີ ໃນວັນອັງຄານ ຂອງວັນທີ 20 ມີນາ ປີ 2012, ຢູ່ທີ່ຫ້ອງປະຊຸມ ຊັ້ນ 4 ຂອງ ພະແນກ ການເງິນ ແຂວງຫົວພັນ ພາຍໃຕ້ການເປັນປະທານຂອງ **ທ່ານ ໄມເລີຍ ພິມມະສອນ**; ຮອງຫົວໜ້າພະແນກ ແຜນການ ແລະ ການລົງທຶນແຂວງຫົວພັນ ແລະ ທັງເປັນຜູ້ຕ່າງໜ້າ ຄະນະຊີ້ນຳ ໂຄງການພັດທະນາໄມ້ປ່ອງຂອງແຂວງຫົວພັນ.

ກອງປະຊຸມດັ່ງກ່າວໄດ້ມີຜູ້ແທນທີ່ຖືກເຊີນຕ່າງໜ້າໃຫ້ແກ່ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ ທັງໝົດ 30 ທ່ານ, ເປັນຍິງ 7 ທ່ານ. ໃນນັ້ນ, ຜູ້ແທນທີ່ເຂົ້າຮ່ວມແມ່ນມາຈາກພະແນກການອ້ອມຂ້າງແຂວງ, ຫ້ອງການກ່ຽວຂ້ອງຂັ້ນເມືອງ, ອຳນາດການປົກຄອງຂັ້ນບ້ານ, ຕົວແທນກຸ່ມຕັດໄມ້ປ້ອນໂຮງງານ, ໂຮງງານແປຮູບໄມ້ປ່ອງ, ບໍລິສັດທີ່ປຶກສາໂພໄຊ, ແລະ ອົງການ GRET-SNVກໍ່ໄດ້ເຂົ້າມາຮ່ວມເພື່ອຄົ້ນຄວ້າປຶກສາຫາລືກັນ ກ່ຽວກັບ ການສ້າງເງື່ອນໄຂ ການລົງທຶນໃຫ້ຫຼາຍຂື້ນໃນຂະແໜງອຸດສະຫະກຳໄມ້ປ່ອງ ແລະ ທັງສ້າງຄວາມເຂັ້ມແຂງ ໂຮງງານແປຮູບໄມ້ປ່ອງທີ່ມີ ໃຫ້ໄດ້ສືບຕໍ່ດຳເນີນທຸລະກິດເພື່ອສ້າງລາຍໄດ້ແກ່ຊາວບ້ານຢ່າງໝັ້ນຄົງ.

ຕະຫຼອດໄລຍະເວລາການດຳເນີນກອງປະຊຸມເຄິ່ງຄາບ, ທ່ານ **ສົມພອນ ເຮືອງວົງສາ**, ທ່ານ **ເພັດສຸລະພົນ ຈຸລະຖິດາ** ແລະ ອາຈານ **ສຸວັນເພັງ ພົມມະສານ** ໃນນາມຂອງ ຄະນະຈັດຕັ້ງພິທີ ໄດ້ລະດົມຄວາມຄິດ ແລະ ອຳນວຍການສົນທະນາຫາລື ໃຫ້ເກີດໃນທາງທີ່ສ້າງສັນ ເຊິ່ງໄດ້ບັນລຸຂໍ້ຕົກລົງຮ່ວມກັນໃນທີ່ປະຊຸມໄດ້ 3 ຫົວຂໍ້ຫຼັກ ທີ່ຈະນຳໄປຈັດຕັ້ງປະຕິບັດ ເພື່ອແກ້ໄຂຂອດບັນຫາ ທີ່ຊ້ຳເຮື້ອຕະຫຼອດໄລຍະ 6 ປີຜ່ານມາ. ໃນນັ້ນ, 3 ຫົວຂໍ້ຫຼັກເຫຼົ່ານີ້ ແມ່ນຈະນຳໄປ ປຶກສາຫາລືລົງເລິກອີກຄັ້ງກັບພະແນກ ການເງິນ, ຂະແໜງສວຍສາອາກອນ, ພະແນກ ອຸດສະຫະກຳ ແລະ ການຄ້າ, ພະແນກ ກະສິກຳ ແລະ ປ່າໄມ້ ແລະ ພະແນກ ແຜນການ ແລະ ການລົງທຶນ.

## 3. ຈຸດປະສົງຂອງກອງປະຊຸມ

ເພື່ອສ້າງເງື່ອນໄຂໃຫ້ແກ່ການລົງທຶນໃຫ້ຫຼາຍຂື້ນໃນຂະແໜງອຸດສະຫະກຳໄມ້ປ່ອງ ແລະ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ ໂຮງງານແປຮູບໄມ້ປ່ອງທີ່ມີຢູ່ໃນປະຈຸບັນໃຫ້ເຂັ້ມແຂງ. ດັ່ງນັ້ນ, ກອງປະຊຸມປຶກສາຫາລື ກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຈິ່ງເຊື້ອເຊີນເອົານາຍບ້ານ, ຕ່າງໜ້າກຸ່ມຕັດໄມ້ປ້ອນໂຮງງານ, ນັກທຸລະກິດ, ອຳນາດການປົກຄອງຂອງເມືອງ ແລະ ພະແນກການຂອງລັດຂັ້ນແຂວງເຂົ້າມາສົນທະນາໃນໂຕະມົນ ໂດຍມີຈຸດປະສົງເພື່ອ:

- ພົບປະໂອ້ລົມກັນ ເພື່ອສ້າງບັນຍາກາດສາຍພົວພັນທີ່ດີກັບທຸກພາກສ່ວນ
- ເປີດເວທີໃຫ້ຊາວບ້ານ ແລະ ໂຮງງານ ນຳສະເໜີແຜນການຜະລິດ ແລະ ທຸລະກິດຢູ່ລອດ
- ຍົກປະເດັນຂື້ນມາປຶກສາຫາລື ແລະ ແກ້ໄຂ ຕໍ່ກັບ ການພັດທະນາຂະແໜງໄມ້ປ່ອງ
- ກຳນົດຫາແນວທາງນຳໄປສູ່ການຈັດຕັ້ງປະຕິບັດ ໃຫ້ໄປສະໜັບສະໜູນ ແຜນຍຸດທະສາດພັດທະນາໄມ້ປ່ອງຂອງ ແຂວງຫົວພັນ

## 4. ບັນດາພະແນການ ແລະ ກົມກອງທີ່ເຂົ້າຮ່ວມ

ກອງປະຊຸມປຶກສາຫາລືນີ້ ແມ່ນໄດ້ເຊີນບັນດາພະແນກການ, ກົມກອງ, ອຳນາດການປົກຄອງເມືອງ, ອຳນາດການປົກຄອງບ້ານ, ຊາວບ້ານ, ພາກເອກະຊົນ ແລະ ອົງການສາກົນ ເພື່ອຮ່ວມກຳນົດທິດທາງແກ້ໄຂບັນຫາຮ່ວມກັນ ເຊິ່ງປະກອບມີບັນດາລາຍຊື່ຂ້າງລຸ່ມນີ້:

1. ທ່ານ ໄມເລີຍ ພົມມະສອນ, ຮອງຫົວໜ້າພະແນກ ແຜນການ ແລະ ການລົງທຶນ
2. ທ່ານ ພອນແສງ ຊົມວາດວົງ, ຫົວໜ້າຂະແໜງ ອຸດສະຫະກຳ ແລະ ຫັດຖະກຳ

3. ທ່ານ ເພັດສາຄອນ ແກ້ວວິລາວັນ, ຮອງຫົວໜ້າຂະແໜງປ່າໄມ້
4. ທ່ານ ຄຳ ໂຮມມີໄຊ, ຮອງເຈົ້າເມືອງ ເມືອງວຽງໄຊ
5. ທ່ານ ອິນພອນ ຄຳມີໄຊ, ຮອງຫົວໜ້າຫ້ອງການອຸດສະຫະກຳ ແລະ ການຄ້າເມືອງວຽງໄຊ
6. ທ່ານ ນາງ ເມຍ ເລມິນເຈົາ, ຜູ້ຈັດການໂຮງງານແປຮູບໄມ້ປ່ອງ
7. ທ່ານ ແທງ, ຜູ້ຈັດການໂຮງງານແປຮູບສຸພາພອນ
8. ທ່ານ ເຄີຍທອງ ພິມມະທອນ, ຜູ້ຊ່ວຍຜູ້ຈັດການໂຮງງານແປຮູບວົງທອນ
9. ທ່ານ ໂດ໋ຫວຽດ, ຕ່າງໜ້າເລຂາວານແທງຄູ່ຮ່ວມທຸລະກິດວົງທອນ
10. ທ່ານ ສົມພອນ ເຮືອງວົງສາ, ວິຊາການ ພະແນກ ແຜນການ ແລະ ການລົງທຶນ
11. ທ່ານ ສຸວັນເພັງ ພົມມະສານ, ທີ່ປຶກສາອາວຸໂສ ດ້ານການຕະຫຼາດເຄື່ອງປ່າຂອງດົງ
12. ທ່ານ ພູວາ ດາລາວົງໄຊ, ທີ່ປຶກສາ ດ້ານພັດທະນາທຸລະກິດ
13. ທ່ານ ເຫວດ ສຸດທິວົງ, ທີ່ປຶກສາອາວຸໂສ ດ້ານການຈັດສັນຄຸ້ມຄອງປ່າໄມ້
14. ທ່ານ ເພັດສຸລະພົນ ຈຸລະຖິດາ, ທີ່ປຶກສາ ດ້ານແຜນຍຸດທະສາດ ແລະ ນະໂຍບາຍ
15. ທ່ານ ຄຳເຫຼັກ ເຮືອງໂພໄຊ, ອຳນວຍການບໍລິສັດທີ່ປຶກສາພັດທະນາ
16. ທ່ານ ໄມລາ, ນາຍບ້ານ ບ້ານນາຫໍ
17. ທ່ານ ວົງສີ, ກຸ່ມຕັດໄມ້ ບ້ານນາຫໍ
18. ທ່ານ ສົມສີ, ນາຍບ້ານ ບ້ານໂສຍ
19. ທ່ານ ສອນມະນີ, ນາຍບ້ານ ບ້ານເດີຍ
20. ທ່ານ ສີງພອນ, ນາຍບ້ານ ບ້ານພູນສ້ານ
21. ທ່ານ ຈັນພົງ, ກຸ່ມຕັດໄມ້ບ້ານພູນສ້ານ
22. ທ່ານ ພູທອງ, ນາຍບ້ານ ບ້ານພູນເໜືອ
23. ທ່ານ ໄມສີ, ນາຍບ້ານ ບ້ານພູນກາງ
24. ທ່ານ ຈັນພອນ, ນາຍບ້ານ ບ້ານນາຕານ
25. ທ່ານ ອ່ຳພອນ, ກຸ່ມຕັດໄມ້ບ້ານນາຕານ
26. ນາງ ດາລີວັນ ຜຸດຜ່ອງ, ນັກວິຊາການລຸ້ນໃໝ່ ດ້ານແຜນທຸລະກິດ
27. ທ່ານ ສິດທິເດດ ເງື່ອມບຸບຜາ, ນັກວິຊາການລຸ້ນໃໝ່ ດ້ານເຄືອຄ່າຍການຕະຫຼາດ
28. ນາງ ໄມຄຳ ສຸຂະທຳມະວົງ, ຫົວໜ້າບໍລິຫານອົງການ SNV ປະຈຳແຂວງຫົວພັນ
29. ນາງ ນຸອັກສອນ ແກ້ວດວງສີນ, ນັກສຶກສາລົງເຝິກງານ
30. ນາງ ວອນມະນີ ພົມມະລາດ, ນັກສຶກສາລົງເຝິກງານ

## 5. ການດຳເນີນກອງປະຊຸມໂດຍລວມ

ກອງປະຊຸມ ແມ່ນດຳເນີນ ແລະ ໃຊ້ເວລາພຽງເຄິ່ງວັນ, ຜູ້ຈັດຕັ້ງພິທີ ແມ່ນໄດ້ນຳສະເໜີສະພາບລວມຕ່ອງໂສ້ມູນຄ່າຕັດໄມ້ປ້ອນໂຮງງານ , ບັນຫາ ແລະ ສິ່ງທ້າທາຍ ເພື່ອເປີດແນວຄວາມຄິດໃຫ້ຜູ້ເຂົ້າຮ່ວມ ມີສ່ວນຮ່ວມປະກອບຄຳເຫັນຕໍ່ກັບການຊອກຫາວິທີທາງແກ້ໄຂຮ່ວມກັນ. ຈາກນັ້ນກໍ່ເປີດເວທີສົນທະນາ ໂດຍໃຫ້ຕ່າງໜ້າແຕ່ລະໂຮງງານ, ບ້ານ ແລະ ກຸ່ມຕັດໄມ້ ຂຶ້ນນຳສະເໜີຮູບບແບບທີ່ຕົນຢາກໃຫ້ແກ້ໄຂອັນເປັນບຸລິມາສິດ. ຜູ້ດຳເນີນພິທີ ໄດ້ໃຊ້ບັດຄຳເປັນເຄື່ອງມືການປຶກສາຫາຄຳຕອບຮ່ວມກັນ ໂດຍການຄັດຈ້ອນສັງລວມປະເດັນໃຫ້ກະທັດຫັດ. ສຳລັບ ຄາບແລງ ແມ່ນປະຊຸມຮ່ວມສະເພາະ

ແຕ່ກຸ່ມໂຮງງານແປຮູບ ເພື່ອພັນຂະຫຍາຍພົນໄດ້ຮັບຂອງກອງປະຊຸມໃນຕອນເຊົ້າທີ່ໄດ້ຕົກລົງຮ່ວມກັນຈາກຫຼາຍຝ່າຍ.

## 6. ຂະບວນການ ແລະ ວິທີການດໍາເນີນກອງປະຊຸມໂດຍລະອຽດ

ໃນເຄິ່ງຄາບເຊົ້າຂອງກອງປະຊຸມນີ້, ຄະນະຜູ້ແທນຈາກຂັ້ນແຂວງ, ເມືອງວຽງໄຊ, ຊາວບ້ານ, ແລະ ພາກທຸລະກິດໂຮງງານແປຮູບໄມ້ປ່ອງ ທີ່ເຂົ້າຮ່ວມກອງປະຊຸມ ໄດ້ຮັບຟັງການລາຍງານ ສະພາບລວມ, ບັນຫາ ແລະ ສິ່ງທ້າທາຍ ຂອງຕ່ອງໂສ້ມູນຄ່າຕັດໄມ້ປ້ອນໂຮງງານ ພ້ອມກັນນີ້ກໍ່ໄດ້ນໍາສະເໜີແນວທາງໃນການແກ້ໄຂຕໍ່ກັບບັນຫາດັ່ງກ່າວ ເຊິ່ງວ່າ ວິທະຍາກອນ ແມ່ນ ທ່ານ **ສົມພອນ ເຮືອງວົງສາ** ເປັນວິຊາການ ພະແນກ ແຜນການ ແລະ ການລົງທຶນ.

ເພື່ອເຊື່ອມສານວຽກງານຕັດໄມ້ຂອງກຸ່ມຜູ້ຜະລິດໃຫ້ມີຄວາມຍືນຍົງ, ທ່ານ **ເພັດສາຄອນ ແກ້ວພິລາວັນ** ເຊິ່ງເປັນຮອງຫົວໜ້າຂະແໜງປ່າໄມ້ ໄດ້ເອົາບົດຮຽນຕົວຈິງໃນການຕັດໄມ້ປ່ອງແບບຖືກເຕັກນິກ ແລະ ໄດ້ປະສົບຜົນສໍາເລັດໃນການສົ່ງເສີມຢູ່ຫວຽດນາມ ຂຶ້ນມາແລກປ່ຽນບົດຮຽນ. ນອກຈາກນີ້, ທ່ານກໍ່ໄດ້ໃຫ້ລາຍລະອຽດ ກ່ຽວແກ່ກັບ ຄວາມເປັນມາຂອງ ແຕ່ລະຊະນິດໄມ້ປ່ອງ ແລະ ວິທີການຕັດກໍ່ແຕກຕ່າງກັນໄປ.

ວາລະຕໍ່ມາ ເພື່ອເນັ້ນໃຫ້ຜູ້ເຂົ້າຮ່ວມເຂົ້າໃຈແຜນງານຂະແໜງໄມ້ປ່ອງ, ທ່ານ ອາຈານ **ສຸວັນເພັງ ພົມມະສານ** ເຊິ່ງເປັນທີ່ປຶກສາອາວຸໂສທາງດ້ານການຕະຫຼາດເຄື່ອງປ່າຂອງດົງ ທີ່ມາຈາກ SNV ສູນກາງ ໄດ້ຂຶ້ນນໍາສະເໜີ ທິດທາງລວມ ສໍາລັບ ແຜນຍຸດທະສາດພັດທະນາໄມ້ປ່ອງ ແຂວງຫົວພັນ, ໂອກາດ ແລະ ສິ່ງທ້າທາຍ ທີ່ອາດຈະເຮັດໃຫ້ ຂະແໜງການພັດທະນາໄມ້ປ່ອງບໍ່ບັນລຸ ເປົ້າໝາຍທີ່ຕັ້ງໄວ້ ສໍາລັບປີ 2011 ຈົນເຖິງປີ 2015 ທັງນີ້ ກໍ່ເພື່ອເປີດແນວຄວາມຄິດຂອງຜູ້ແທນມາຈາກພາກສ່ວນຕ່າງໆໄດ້ຮັບຮູ້ທິດທາງ ແລະ ວິໄສທັດ.

ຈາກນັ້ນ, ທ່ານ **ເພັດສຸລະພົນ ຈຸລະຖິດາ**, ທີ່ປຶກສາດ້ານພັດທະນາຍຸດທະສາດ ແລະ ນະໂຍບາຍໄມ້ປ່ອງ ຂອງອົງການ SNV ປະຈໍາແຂວງຫົວພັນ ກໍ່ໄດ້ນໍາສະເໜີຍຸດທະສາດໃໝ່ ວິທີການພັດທະນາຂອງຂະແໜງໄມ້ປ່ອງ ແມ່ນຈະສຸມໃສ່ນັກປະກອບການເປັນຫຼັກ ໃນເມື່ອໂຄງການຈົບລົງ ຊາວບ້ານ ແລະ ນັກປະກອບການຈະມີສາຍພົວພັນຊື້ຂາຍຢ່າງໝັ້ນຄົງ. ແລະຕໍ່ມາ, ທ່ານ ເພັດສຸລະພົນ ຈຸລະຖິດາ ກໍ່ນໍາພາສົນທະນາກຸ່ມ ໂດຍເປີດໂອກາດໃຫ້ຊາວບ້ານ ແລະ ໂຮງງານ ຂຶ້ນລາຍງານສະພາບລວມ ແລ້ວຂັດຈ້ອນບັນຫາ ລົງໃສ່ບັດຄໍາ ແລ້ວຕິດໃສ່ ກະດານ ເພື່ອຮັບຮູ້ນໍາກັນ. ຈາກນັ້ນ, ກໍ່ໄດ້ຢາຍບັດຄໍາໃຫ້ແຕ່ລະທ່ານ ຊຽນລົງຜູ້ລະໜຶ່ງຄໍາຕອບເປັນຢ່າງໜ້ອຍ ເພື່ອສະເໜີວິທີການແກ້ໄຂ ທີ່ແຕ່ລະພາກສ່ວນຄິດວ່າດີທີ່ສຸດ. ໃນຕອນທ້າຍ, ກໍ່ໄດ້ສັງລວມ ແລະ ເປັນເອກະພາບກັນໃນຄໍາຕອບ.

ສໍາລັບພາກບ່າຍ, ທ່ານ ອາຈານ **ສຸວັນເພັງ ພົມມະສານ** ແລະ ທ່ານ **ເພັດສຸລະພົນ ຈຸລະຖິດາ** ໄດ້ນໍາພາກຸ່ມໂຮງງານຄົ້ນຄວ້າ ຜົນຂອງກອງປະຊຸມໃນຕອນເຊົ້າ ແລະ ຍົກເອົາບັນຫາທີ່ຕ້ອງແກ້ຮີບດ່ວນມາຕົກລົງຮ່ວມກັນກັບ ພາກທຸລະກິດ ເປັນຕົ້ນ ການສະໜອງໄມ້ປ້ອນໂຮງງານ ແລະ ການໃຫ້ລາຄາແກ່ປະຊາຊົນ ແລະ ກຸ່ມໂຮງງານກໍ່ຮັບເອົາຢ່າງເປັນເອກະພາບ.

## 7. ຜົນໄດ້ຮັບຂອງກອງປະຊຸມປຶກສາຫາລື

ຜ່ານການປະຊຸມຫາລື ເຫັນໄດ້ວ່າ ຜູ້ແທນທີ່ເຂົ້າຮ່ວມ ໄດ້ມີສ່ວນຮ່ວມປະກອບຄຳເຫັນຢ່າງຈິງຈັງ ແລະ ໃນແນວທາງທີ່ສ້າງສັນ ເຊິ່ງເຮັດໃຫ້ຜົນໄດ້ຮັບຂອງກອງປະຊຸມຄັ້ງນີ້ ບັນລຸເກີນຄາດໝາຍທີ່ໄດ້ຕັ້ງໄວ້. ແຕ່ກໍ່ບໍ່ແມ່ນວ່າ ສຳເລັດຢ່າງສິ້ນເຊີງ ມັນເປັນພຽງຈຸດເລີ່ມຕົ້ນ ຂອງວຽກງານນະໂຍບາຍທີ່ຈະຕ້ອງໄດ້ ນຳເອົາໄປຈັດຕັ້ງປະຕິບັດ ໃນຕໍ່ໜ້າຢ່າງເປັນຮູ້ປະທຳ. ໃນນັ້ນ, ປະກອບມີ 3 ຫົວຂໍ້ ທີ່ໄດ້ຕົກລົງໃນທີ່ປະຊຸມ ເພື່ອຈະໄປສະໜັບສະໜູນ ແລະ ສ້າງເງື່ອນໄຂໃຫ້ແກ່ການລົງທຶນໃນອຸດສະຫະກຳຂະແໜງໂຮງງານແປຮູບໄມ້ປ່ອງ ໃຫ້ມີການພັດທະນາ ຄວບຄູ່ກັບການສ້າງລາຍຮັບ ແລະ ອາຊີບທີ່ໝັ້ນຄົງແກ່ຊາວບ້ານ. ສິ່ງທີ່ຈະນຳໄປແກ້ໄຂໃຫ້ສອດຄ່ອງກັບແຜນຍຸດທະສາດ ປະກອບມີດັ່ງນີ້:

### 7.1. ທິດທາງແກ້ໄຂ ເພື່ອສະໜອງໄມ້ປ່ອງປ້ອນໂຮງງານໃຫ້ພຽງພໍ

- ພົບປະໂອ້ລົມ, ປຶກສາ, ຄົ້ນຄວ້າ ກັບພະແນກ ການເງິນ, ຂະແໜງສວນສາອາກອນ, ພະແນກ ອຸດສະຫະກຳ ແລະ ການຄ້າ, ແລະ ພະແນກ ກະສິກຳ ແລະ ປ່າໄມ້ ເພື່ອຊອກຫາຂໍ້ຕົກລົງຮ່ວມກັນໃນການຈັດຕັ້ງປະຕິບັດ ( ຫຼື ອາດນຳໄປສູ່ ວຽກງານຜ່ານປະຕູດຽວ?)
- ຫຼຸດຜ່ອນ ອາກອນ ແລະ ຄ່າສິ້ນເປືອງຕ່າງໆ ແລ້ວໃຫ້ໂຮງງານໄປຍົກລາຄາຊື້ໄມ້ປ່ອງຈາກຊາວບ້ານສູງຂຶ້ນ
- ເຮັດຂໍ້ຕົກລົງກັບໂຮງງານ ຖ້າຫາກພາກລັດຫຼຸດຜ່ອນອາກອນ ແລະ ຄ່າສິ້ນເປືອງຕ່າງໆລົງໃຫ້ ເພື່ອຮັບປະກັນໄດ້ວ່າ ໂຮງງານຈະເພີ້ມລາຄາໃຫ້ຊາວບ້ານແທ້
- ໂອ້ລົມກັບຊາວບ້ານ ເພື່ອຊອກຫາບາງວິທີການ ແລະ ຂໍ້ຕົກລົງຮ່ວມກັນເພື່ອໃຫ້ຊາວບ້ານອື່ນເຂົ້າໄປຕັດໄມ້ໃນບ້ານ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ
- ປະເມີນຄວາມສາມາດຂອງແຕ່ລະບ້ານ ວ່າຈະສາມາດຕັດໄມ້ປ່ອງປ້ອນໂຮງງານໄດ້ຫຼາຍປານໃດ ແລະ ສ່ວນທີ່ເຫຼືອ ກໍ່ຫາຂໍ້ຕົກລົງຮ່ວມກັນ ເພື່ອໃຫ້ໂຮງງານເອົາບ້ານອື່ນເຂົ້າໄປຕັດຕາມລະບຽບການຄວາມຍືນຍົງ
- ໃນຄະນະດຽວກັນ, ອົງການ GRET ຈະດຳເນີນການຈັດສັນປ່າໄມ້ປ່ອງທຳມະຊາດ ໃນບ້ານເດີຍ ແລະ ບ້ານພູນກາງ
- ສະໜອງແຫຼ່ງທຶນ ຈຳນວນ 3,000,000 ກີບ – 5,000,000 ກີບ ໃຫ້ສອງບ້ານທີ່ໄດ້ຈັດສັນປ່າ ເພື່ອເປັນກອງທຶນໝູນວຽນໃນການບໍລິຫານປ່າໄມ້ປ່ອງ
- ກຳນົດລາຄາຮ່ວມກັນ ລະຫວ່າງຊາວບ້ານ ແລະ ຮງງານ ໂດຍບໍ່ເຮັດໃຫ້ລາຄາຢູ່ຝ່າຍລາວ ແລະ ຫວຽດນາມ ແຕກຕ່າງກັນຫຼາຍຈົນເກີນໄປ
- ຂັ້ນເທີງ ອະນຸມັດໃຫ້ໂຮງງານເຂົ້າໄປຕັດໄມ້ໃນບ້ານທີ່ໂຮງງານລົງທຶນສ້າງທາງໄປກ່ອນລ່ວງໜ້າ ຖ້າຫາກບ້ານບໍ່ຕັດໃຫ້ໂຮງງານ
- ປັບປຸງການຂໍໂກຕ້າຂອງໂຮງງານໃຫ້ເຂົ້າລະບົບ ແລະ ສະດວກງ່າຍຂື້ນ

## 7.2. ທິດທາງແກ້ໄຂ ເພື່ອປັບປຸງລາຄາຊື້ຂາຍໃຫ້ຊາວບ້ານ

- ຄົ້ນຄວ້າປຶກສາ ກັບພະແນກ ການເງິນ, ຂະແໜງສວນສາອາກອນ, ພະແນກ ອຸດສະຫະກຳ ແລະ ການຄ້າ, ແລະ ພະແນກ ກະສິກຳ ແລະ ປ່າໄມ້ ເພື່ອຊອກຫາຂໍ້ຕົກລົງຮ່ວມກັນໃນການຈັດຕັ້ງປະຕິບັດ
- ອາກອນໂກຕ້າ (45 ກີບ/ກລ) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາໄວ້
- ພາສີສົ່ງອອກ (10%) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາໄວ້
- ເສຍພັນທະໃຫ້ບ້ານ (5 ກີບ/ກລ) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາໄວ້
- ເສຍຄ່າບູລະນະປ່າ (10 ລຳ/0.1 USD$) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາໄວ້
- ເສຍຄ່າເອກະສານຜ່ານດ່ານ (250,000 ກີບ/ ຄັນລົດ) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາ
- ເສຍຄ່າກວດກາສິນຄ້າກ່ອນເຄື່ອນຍ້າຍ (50,000 ກີບ/6 ຄົນ/ຄັ້ງ) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາໄວ້
- ເສຍຄ່າເອກະສານສົ່ງອອກ (350,000 ກີບ/ຄັ້ງ) ອາດຈະຫຼຸດຜ່ອນ ຫຼື ຍັງຄົງຮັກສາໄວ້

## 7.3. ການພັດທະນາ ນະໂຍບາຍຫຼຸດຜ່ອນອາກອນໂກຕ້າໄມ້ປ່ອງ

- ທົບທວນນະໂຍບາຍໂກຕ້າທີ່ມີຢູ່ໃນປະຈຸບັນ
- ຈັດປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ທີ່ໃຫ້ຄວາມສົນໃຈ ເພື່ອນຳສະເໜີເລື່ອງນະໂຍບາຍໂກຕ້າທີ່ມີ ແລະ ປະກອບຄຳເຫັນຮ່ວມກັນ
- ຮ່າງນະໂຍບາຍໂກຕ້າທີ່ເອື້ອອຳນວຍໃຫ້ຂະແໜງການພັດທະນາໄມ້ປ່ອງ ແລະ ຊອກຫາທາງເລືອກທີ່ຫຼາກຫຼາຍ ເພື່ອຫຼຸດຜ່ອນອາກອນໂກຕ້າໄມ້ປ່ອງ
- ທົດລອງຈັດຕັ້ງປະຕິບັດ ໃນບາງບ້ານທີ່ກຳນົດໃຫ້ເປັນເປົ້າໝາຍ
- ຕິດຕາມ ແລະ ປັບປຸງນະໂຍບາຍການຫຼຸດຜ່ອນອາກອນໂກຕ້າໄມ້ປ່ອງ ສຳລັບແຂວງຫົວພັນ
- ຜັນຂະຫຍາຍຜົນສຳເລັດໄປສູ່ເຂດອື່ນ

# 8. ບົດສະຫຼຸບໂດຍຫຍໍ້

ກອງປະຊຸມດັ່ງກ່າວນີ້ ໄດ້ບັນລຸຕາມຈຸດປະສົງ, ເປົ້າໝາຍທີ່ໄດ້ກຳນົດຕາມວາລະກອງປະຊຸມ ແລະ ວິທີການທີ່ໄດ້ກຳນົດໄວ້. ດັ່ງນັ້ນ, ເພື່ອຕອບສະໜອງປັດໄຈໃນການສ້າງເງື່ອນໄຂໃຫ້ແກ່ການລົງທຶນໃຫ້ຫຼາຍຂື້ນໃນຂະແໜງອຸດສະຫະກຳໄມ້ປ່ອງ ແລະ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ ໂຮງງານແປຮູບໄມ້ປ່ອງທີ່ມີຢູ່ໃນປະຈຸບັນໃຫ້ເຂັ້ມແຂງ. ສາມບັນຫາ ທີ່ໄດ້ມີທິດທາງແກ້ໄຂ ຄວນຈະນຳໄປຈັດຕັ້ງປະຕິບັດໃຫ້ຖືກແກ້ຄື: 1. ສະໜອງວັດຖຸດິບປ້ອນໂຮງງານ ໂດຍກຳນົດລາຍລະອຽດໃນຂໍ້ 7.1 ຂ້າງເທິງ; 2. ລາຄາຊື້ຂາຍໃຫ້ມີຄວາມເປັນທຳຕໍ່ຊາວບ້ານ; 3. ນະໂຍບາຍການຫຼຸດຜ່ອນອາກອນໂກຕ້າຖືກອະນຸມັດ ແລະ ຮັບຮອງ ເພື່ອສ້າງແຮງຈູງໃຈ ດຶງດູດເອົານັກລົງທຶນ. ຖ້າຫາກບໍ່ຖືກແກ້ ແມ່ນແນວ

ໂມ້ມການປິດກິດຈະການໂຮງງານແປຮູບໄມ້ປ່ອງ ຈະເປັນຜົນທາງລົບ ຕໍ່ຂະແໜງການພັດທະນາໄມ້ປ່ອງ ຂອງແຂວງຫົວພັນໃນຕໍ່ໜ້າ.

## 9. ຂໍ້ສະເໜີ

ກອງປະຊຸມດັ່ງກ່າວ ຄວນມີການຈັດ ທຸກໆ ສາມເດືອນ ແລະ ນຳເອົາບັນຫາ ທີ່ແກ້ບໍ່ໄດ້ ຈາກກອງປະຊຸມຄັ້ງນີ້ ມາທົບທວນກັນອີກ ຫຼື ອາດຈະນຳເອົາບັນຫາ ອັນໃໝ່ໆ ມາແກ້. ສະຖານທີ່ປະຊຸມ ຈະໝູນວຽນເປັນເຈົ້າພາບ ເພື່ອສ້າງຄວາມປອງດອງ ແລະ ສາມັກຄີຮັກແພງ (ໝູນວຽນຈັດປະຊຸມ ແມ່ນ : ແຂວງ, ເມືອງ , ບ້ານ, ໂຮງງານ, ອື່ນໆ).

## 10. ບົດຮຽນທີ່ຖອດຖອນໄດ້

ເປັນກອງປະຊຸມ ທີ່ມີຄວາມໝາຍ ແລະ ເປັນປະໂຫຍດ ກັບ ທຸກໆພາກສ່ວນ ທີ່ນຳເອົາບັນຫາ ແລະ ສິ່ງທ້າທາຍ ມາແກ້ໄຂຮ່ວມກັນ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ສົນທະນາໃນທາງທີ່ສ້າງສັນ ໂດຍ ຫຼີ້ກລ້ຽງການຫັກລ້າງເຊິ່ງກັນ ແລະ ກັນ.

ທີ່ ຊຳເໜືອ, ວັນທີ 23 ມີນາ 2012

| ປະທານກອງປະຊຸມ: | ຜູ້ລາຍງານ: |
| --- | --- |
| ທ່ານ ໄມເລີຍ ພິມມະສອນ | ສົມພອນ ເຮືອງວົງສາ |
| ຮອງຫົວໜ້າ ພຜທ ແຂວງຫົວພັນ | ວິຊາການ ພຜທ ແຂວງຫົວພັນ |

ເອກະສານຕິດຄັດ 1.

# ວາລະກອງປະຊຸມປຶກສາຫາລື ໃນຄັ້ງວັນທີ 20 ມີນາ 2012

| ວັນເວລາ | ລາຍລະອຽດການດຳເນີນປະຊຸມ | ວິທີການ/ເຄື່ອງມື | ຜູ້ຮັບຜິດຊອບ |
|---|---|---|---|
| **8.00 – 8.30** | **ລົງທະບຽນ** | ແບບຟອມ | ໄມຄຳ |
| 8.30 – 8.45 | ເປີດພິທີ ແລະ ກ່າວຈຸດປະສົງ | ໃຫ້ທິດຊີ້ນຳ | ປະທານ |
| 8.45 – 9.15 | ນຳສະເໜີພາບລວມຂອງຕ່ອງໂສ້ມູນຄ່າ ຕັດໄມ້ປ້ອນໂຮງງານ, ສະພາບລວມ, ຂໍ້ຄົງຄ້າງ ແລະ ສະເໜີທິດແກ້ໄຂ | ນຳສະເໜີຜ່ານຈໍພາບ | ສົມພອນ ເຮືອງວົງສາ |
| 9.15 – 9.45 | ສະເໜີແຜນຜະລິດຂອງໂຮງງານ | ລາຍງານສະພາບລວມ | ຕ່າງໜ້າໂຮງງານ |
| 9.45 – 10.30 | ສະເໜີແຜນຜະລິດຂອງຊາວບ້ານ | ລາຍງານສະພາບລວມ | ຕ່າງໜ້າກຸ່ມຕັດໄມ້ |
| **10.30 – 10.45** | **ພັກຜ່ອນ ດື່ມກາເຟ** | | |
| 10.45 – 11.00 | ແນວຄວາມຄິດໃນການພັດທະນາເສີມສ້າງຄວາມສາມາດ ອີງໃສ່ ນັກປະກອບການ ເປັນຫຼັກ | ເຈັ້ຍແຜ່ນໃຫຍ່, ເຜີດ | ເພັດ |
| 11.00 – 11.30 | ປຶກສາຫາລື ກ່ຽວກັບ ການຕັດໄມ້ປ່ອງປ້ອນໂຮງງານໃຫ້ໄດ້ຕາມຄວາມຕ້ອງການຂອງຕະຫຼາດ (ປະກອບຄຳເຫັນຮ່ວມກັນ )<br>- ເລືອກບ້ານຕົວແບບ ໃນການຈັດສັນປ່າໄມ້ປ່ອງ<br>- ກຳນົດເອົາບ້ານຕົວແບບ ທີ່ຈັດຕັ້ງກຸ່ມຕັດໄມ້ປ້ອນໂຮງງານ | ເຈັ້ຍແຜ່ນໃຫຍ່, ເຜີດ, ສະກອດຕິດເຈັ້ຍ, ບັດຄຳ | ເພັງ ແລະ ເພັດ |
| 11.30 – 12.00 | ປຶກສາຫາລື ລະບົບການຂໍອະນຸມັດໂກຕ້າໄມ້ ໃຫ້ສະດວກຂຶ້ນ ແລະ ສ້າງນະໂຍບາຍທີ່ເອື້ອອຳນວຍໃຫ້ພາກທຸລະກິດ ຢ່າງໜ້ອຍ ມີໜຶ່ງນະໂຍບາຍ ໃນປີນີ້<br>- ທົບທວນ ລະບົບຂໍໂກຕ້າໄມ້ປ່ອງ ທີ່ຈັດຕັ້ງປະຕິບັດຜ່ານມາ<br>- ຍົກນະໂຍບາຍທີ່ສຳຄັນຂຶ້ນມາ ເພື່ອໄປແກ້ຂອດບັນຫາຂະແໜງການໄມ້ປ່ອງຂອງແຂວງຫົວພັນ ເພື່ອເປັນບົດຮຽນໃຫ້ແຂວງອື່ນ ເອົາໄປຜັນຂະຫຍາຍ | ເຈັ້ຍແຜ່ນໃຫຍ່, ເຜີດ, ສະກອດຕິດເຈັ້ຍ, ບັດຄຳ | ເພັງ ແລະ ເພັດ |
| **12.00 – 13.30** | **ຮັບປະທານອາຫານທ່ຽງຮ່ວມກັນ ແລະ ປິດກອງປະຊຸມ** | ໃຫ້ທິດຊີ້ນຳຈາກປະທານປະຊຸມ | ປະທານ |
| 13.30 – 15.00 | ໂອ້ລົມກັບໂຮງງານ ຢູ່ຫ້ອງການໂຄງການ | | ເພັງ ແລະ ເພັດ |

# REPORT
## Final Edition

## Multi-Stakeholder Consultation Workshop on
### *Creating Enabling Bamboo Investment Environment & Strengthening Existing Bamboo Factories in Houaphanh, Lao PDR.*

***Venue:** 4th floor of Department of Finance, XamNeua city, Houaphanh province*
***Date:** 20 March 2012*



**©2012, All Rights Reserved**

Written by:

Somphone Heuangvongsa, DPI Policy Coordinator
Phetsoulaphonh N. Choulatida, Strategy Development & Policy Advisor

23 March 2012

ໂຄງການ ພັດທະນາໄມ້ປ່ອງ ແຂວງຫົວພັນ
Bamboo Sector Development Project, Houaphanh Province

# Table of Content


1. Background and rationale ..... 14
2. Introduction ..... 15
3. Objectives of the workshop ..... 16
4. Participants attended ..... 16
5. General workshop delivery ..... 16
6. Methods/process of the workshop ..... 17
7. Workshop results ..... 17
   7.1. Supplying bamboo culms to factories sufficiently ..... 18
   7.2. Increasing price for farmer side ..... 18
   7.3. Developing policy on quota exemption for bamboo sector development in Houaphanh ..... 18
8. Executive summary of the workshop ..... 18
9. Suggestions and recommendations ..... 19
10. Lessons learned ..... 19

# 1. BACKGROUND AND RATIONALE

The Bamboo Development Sector in Houaphanh province is under-commercialization, it's not easy in shifting from traditional production to insustrialization. Since 2007, the paper pulp factory in Sobbao district started operation on any type of bamboo, the paper pulp is semi-product which will product the burning paper in term of Buddhism religional worship, Vietnam and China are targeted market segment for export. And this factory is classified as a pioneer but the pollutant drainage system cannot doubt for friendly environment, it needs additional assessment. In 2008 later, 2nd bamboo processing industry was emerged in ViengXai district. Teng and Souphaphone have been recognized as bilateral license holding between Vietnamese and Lao capital. Only one year of operation then it was closed temporary in late 2009 until present due to shortage of raw materials and Vietnamese currency went down. By the way, this factory has planed to re-open the operation his business.

Following by LeMinhChau and Vongthone factories, both of them started operating their bamboo business since 2009 and 2010 respectively. Most of their processing concentrates on semi-products namely bamboo slats, bamboo strips, chop-sticks, tooth pick, barbecued skewer, and incense-stick. Consequently, the flow of product goes to Vietnam. Unluckily, the Vongthone factory trends to be closed its operation by early 2012 and LeMinhChau will take village bamboo suppliers from Vongthone. Consequently, Houaphanh remains only LeMinhChau bamboo processing factory but we cannot also doubt the stability of the LeMinhChau factory, it might be closed if two key issues, such as shortage of raw materials and time consuming for quota system, are not solved seriously by concerned departments of the government.

So far, those bamboo factories have persistently been taken an adventure, if three keys issues never solve seriously the absence of bamboo industries in Houaphanh will be under-developed. Hence, three keys issues are: 1. Shortage of raw materials feeding to factories due to farmer is unable to cut; 2. unfair price is introcuced to farmers; 3. Investors are not sure about investment policy, it does not support seriously.

Table 2. Bamboo processing factories in Houaphanh

| Factory owner | Type of business | % of business holding | Location | Value chain | Type of bamboo | Contact details |
|---|---|---|---|---|---|---|
| Mr. Vongthone | LeXuanTeng bamboo processing company | Combination of Vietnamese and Lao capital | Ban Phoun Kang in ViengXay | Slats, Strips, Incense sticks, tooth picks | Mai Kuan, Mai Hia | Tel.+856 (030)5161347; 9122752 +856 20 98364009 |
| Mr. LeMinhChau | LeMinhChau bamboo processing conpany | 100% owned by Vietnamese | Ban Deuy in ViengXay | Slats, strips, chop stick, Incense sticks, tooth picks | Mai Kuan, MaiLouang, Mai Hia | Tel.+856 (020)23484603 |
| Mr. Teng | Souphaphone bamboo processing co.,Ltd | Combination of Vietnamese and Lao capital | Ban VangHai in ViengXay | Chop stick, Incense sticks, tooth picks | Mai Kuan, Mai Hia | Tel.+856 (020)55665017 +856(064)312315 |
| Mr. Long | Sobbao paper pulp factory Co.,Ltd | 100% owned by Vietnamese | Ban MuangHom in Sobbao | Paper pulp | Any type of bamboo | Tel.+84 931 204 674 |

(Source: SNV, 2012)

## 2. INTRODUCTION

In supportive provision of bamboo development value chain in harmonizing with development of supportive favourable policies in Houaphanh province, community based is one approach that we're emphasizing on it. The key driven issue that we have to pay attention is, build the trust for local traders in order to help them operate their business smoothly in bamboo sector by developing from semi-products to final products as the aim of provincial strategic plan of Houaphanh. The ultimate benefit scaters entire community which known as “win-win” meaning to say that farmers have stable income and employment, private sector gains profit from bamboo investment and provincial treasury benefits as well. Therefore, it requires a proper working approach of Public Private Partnership (PPP) through bamboo natural forest menagement in effective way. In the past six years, bamboo factories in Houaphanh province operate not full to the brim due to shortage materials supply to factories. So far, some factories were closed operation, it trends to have only one factory in ViengXai district moving forward its operation and we can not doubt when it will likewise close if lack of raw materials supply to factory same as other factories before.

Consequently, Department of Planning and Investment (DPI) in the name of bamboo taskforce in Houaphanh province together with district authorities of XamNeua, ViengXai, Sobbao and concerned departments helped to organize this consultation workshop in order to implement the Houaphanh bamboo strategy and main activity of this workshop is to introduce the results of bamboo factories study in two districts of ViengXai and Sobbao in Houaphanh province, Lao PDR and then raise up the findings and together identify an appropriate direction. Therefore, this workshop officially held on March 20, 2012 at 8.30 am. The venue took place at the 4th floor of department of finance under figureheaded by Sir **MaiLeoi Phimmasone** the duputy head of DPI and he is on the name of bamboo taskforce committees.

There are 29 representatives (seven females) from concerned departments of government and private sectors have invited to attend this meaningful workshop. Therein including provincial departments, ditrict authotities, district offices, village clusters and villages, farmer groups, factories, LCB and GRET-SNV at aiming of consultation on creating enabling bamboo investment environment & strengthening existing bamboo factories in Houaphanh. In view of this, stable income generating and employment are popularized isuues that we raised up to consult.

To ultilize a half day of workshop, Mr. **Somephone Heuangvongsa**, Mr. **Phetsoulaphonh N. Choulatida** and Mr. **Souvanpheng Phommasane**, in the name of multi-stakeholder workshop, facilitated audience in group discussion by brainstorming them put issues on the table to find out the short-term and long term solutions. The atmosphere of discussion was seriously agrued and it seemed to be uncontrollable. Definitely, three hot topics have been chlonic during last 6 years til present are finalised with same agreement and they will bring separately specific meeting to further discussion with Department of finance, division of taxation, Deaprtment of Trade and Commerce, Provincial Agriculture and Forestry, and Department of Planning and Investment.

## 3. OBJECTIVES OF THE WORKSHOP

By creating enabling bamboo investment environment & strengthening existing bamboo factories in Houaphanh. Therefore, this multi-stakeholder workshop was invited concerned parties for discussion in the round table at provincial conference and our objectives are:-

- To create an atmosphere of good relationship and trust building among bamboo stakeholders
- To give an opportunity for factory representative introduces production plan and its survival extent
- To discuss on problem issues from producer, factory and government related to bamboo SME
- To identify key interventions which can be helpful for bamboo factories in Houaphanh province

## 4. PARTICIPANTS ATTENDED

The Participants who are attended whole sessions of this workshop consists of:-

1. Mr. MaiLeoi Phimmasone, Deputy head of DPI
2. Mr. Phoneseng Zomvathvong, Head of Industry and Handicraft Dividion
3. Mr. Phetsakone Keophilavanh, Deputy Head of Forestry Dividion
4. Mr. Kham Hommixai, Vice-District Governor of ViengXai
5. Mr. Inphone Khammixai, Deputy Head of DOIC of ViengXai
6. Madam LeMinChau, Deputy diredtor of Bamboo Processing Factory in ViengXai
7. Mr. Teng, Director of Souphaphone Bamboo Factory
8. Mr. Khiaythong Phimmasone, Production Manager of Vongthone Bamboo Factory
9. Mr. Doviet, Representative of LeXuanTeng as shared-holder of Vongthone Factory
10. Mr. Somphone Heuangvongsa, DPI Policy Coordinator
11. Mr. Souvanpheng Phommasane, Senior NTFP marketing Advisor
12. Mr. veth Soutthivong, Forest Resource Management Advisor
13. Mr. Phetsoulaphonh N. Choulatida, Strategy Development & Policy Advisor
14. Mr. Khamlek Heuangphoxai, Diretor of Phoxai Development Consulting Co.,Ltd
15. Mr. Maila, Village chef of Ban NaHo
16. Mr. Vongsy, Representative of Bamboo Harvesting Group in Ban NaHo
17. Mr. Somsy, Village chef of Ban Soi
18. Mr. Sonmany, Village chef of Ban Deuay
19. Mr. Singphone, Village chef of Ban PhounSanh
20. Mr. Chanhpheng, Representative of Bamboo Harvesting Group in Ban PhounSanh
21. Mr. Phouthong, Village chef of Ban PhounNeua
22. Mr. MaiSy, Village chef of Ban PhounKang
23. Mr. Chanhphone, Village chef of Ban NaTarn
24. Mr. Amphone, Representative of Bamboo Harvesting Group in Ban NaTarn
25. Miss. Dalivanh Phouthphong, YDP in Business Plan
26. Mr. Sitthideth Nguamboupha, YDP in NTFP
27. Miss. Maikham Soukkhathammavong, SNV admin in Houaphanh
28. Miss. Nouacksone keodouangssine, National Intern
29. Miss. Vonemany Phommalath, national intern

## 5. GENERAL WORKSHOP DELIVERY

This workshop carried out and spent half day, the resource persons introduced the overview of value chain of bamboo culm supply to factory, problems and challenges in order to open democratic discussion stage for different actors to provide idea, comments toward hot issues and finalize the best solutions for intervention of government, factory, and farmer side. The procedure is given an opportunity for different actors to share idea and present their own preferable options and come up with prioritizing option for an optimal level. By achieving this, facilitators used cards and distributed to everyone to write down their thought and played with those cards for sceening issue. For the afternoon session, we had meeting with factory owners only to identify how we implement the results of workshop in the morning. Agreement was done by whole factory owners and ready to involve if government reduce tax and price will be given to farmer side and factory owner will have increased productivity.

## 6. METHODS/PROCESS OF THE WORKSHOP

In the morning session, delegations from the province, district of ViengXai, Villages and private sector have received a briefed study report on current situation of factory operation, problems and challenges of this value chain and some tentative solutions which have dailgued with communities and traders are introduced to audience in order to make an understanding in the same level before moving to next session. This session has conducted by Mr. **Somephone Heuangvongsa**, the policy coordinator from the DPI.

To make link of bamboo sustainable harvesting method, Mr. **Phetsakhone Keophilavanh** as the Deputy Head of forestry division, he shared the successful lesson learnt from Vietnam to explain how Vietnamese farmers have been doing and Lao people currently cut. And then, he gave a detail about different types of bamboo and the method of growing, the cutting method is also differently from each other, he said.

Next session, increasing people understanding bamboo sector development programme, Mr. **Souvanpheng Phommasane** as senior NTFP Marketing Advisor, he was given the idea of Houaphanh Bamboo Strategy, opportunity and challenges was set from 2011-2015. This is the entry point to open participants'mind knowing on the bamboo vision and direction of how we will go about.

Since people there knew story well, Mr. **Phetsoulaphonh N. Choulatida** as Strategy Development and Policy Advisor, he advised about new paradigm shift of how important is for working with private sector. Meaning that, we're current focussing to traders, investors and factory owners (local government was surprising why we help traders, not farmers, they're still questioned us at that time) but whenever project phases out the traders, investors and factory owners will stay there and buy products from farmers, project does not buy but project capacitate private sectors to make a good relationship with farmers. When people understood then we proceeded to group discussion by giving three main issues what they have and find out the proper solutions. Meta-cards were used and one person can write down on the card minimum 3 option what they prefer to solve. Summary was done together on the wall and people can remove if they see it is same or similar idea.

The afternoon session, Mr. **Souvanpheng Phommasane** and **Phetsoulaphonh N. Choulatida** worked with factory owners and the meeting took place at SNV office in Houaphanh. We discussed deeper about the results of morning session. We sought urgent task to be done ahead during waiting tax exemption approval from government side, it is not easy and time consuming we hope. The aggreement is firstly we will facilitate the supply and demand from both side (factory and farmer) and secondly is price scheme these are adopted by factory owners.

## WORKSHOP RESULTS

This workshop denoted that all participants seriously provide information and their own perspective to encourage this value chain go smoothly and people happy from this. The methodology of consultation was carried out entertainingly and we achieved poutput more then we expected. This is not meant that we're successful, it is just the beginning of favourable policy creating, and we will bring these three issues to implement even if the output will be slow or fast as long as they support all actors in the bamboo sector. Therein, there are three tpoics were agreed with whole audience and they will serve in creating enabling bamboo investment environment in harmonizing with generating stable income and employment for villagers. The things that we will do are mentioned below of next page:

## 7.1. SUPPLYING BAMBOO CULMS TO FACTORIES SUFFICIENTLY

- Talk with Department of Finance, Taxation division, DIC and PAFO it needs for a common and agreed upon approach and implementation (one stop shop?)
- Reduce levies for factory side and increase price for farmer side
- Make an agreement with factories if Government reduces levies and fees
- Discuss with farmers to allow other villages cutting bamboo culms to factory
- Assess capability of each village to cut bamboo culms to factories and remain is given to factories cutting according to quota application
- In the same time, GRET will implement Natural Bamboo Forest management in two villages of Ban Duay and PhounKang as result of workshop today
- Provide village fund in amount of 3,000,000 LKIP – 5,000,000 LKIP to villages where completely done Natural Bamboo Forest Management
- Pricing scheme is set participatory with farmers and factories, don't make any big different from Vietnam side
- Local government allows factories cut culms from villages where they construct road to forest base on law and regulation
- Improve quota process simplifier; the quota should perfectly be set up based on the resources supply

## 7.2. INCREASING PRICE FOR FARMER SIDE

- Discuss with concerned departments of bamboo taskforce to reduce levies and fees from factories and increase price for farmer
- Probably reduce or maintain Quota fee (45 LKIP/Kg)
- Probably reduce or maintain Export tax (10%)
- Probably reduce or maintain village fee (5 LKIP/Kg)
- Probably reduce or maintain the reforestation fee (10 culms/0.1 USD$), known as quota document
- Probably reduce or maintain document fee for International check point (250,000 LKIP/ vehicle)
- Probably reduce or maintain the inspection fee before moving from factory gate (50,000 LKIP/person/time)
- Probably reduce or maintain export permit and document fee (350,000 LKIP/time)

## 7.3. DEVELOPING POLICY ON QUOTA EXEMPTION FOR BAMBOO SECTOR DEVELOPMENT IN HOUAPHANH

- Review the current quota policy
- Conduct consultation workshop with concerned stakeholders and interested groups
- Draft a revise quota system and develop many options to exempt tax and quota
- Try out the implementation in pilot villages
- Follow up and improve exempt tax and quota for bamboo sector in Houaphanh
- Scale up

## 7. EXECUTIVE SUMMARY OF THE WORKSHOP

This workshop has met its objectives and proposes as it planned. Hence, to respond factor in creating enabling bamboo investment environment & strengthening existing bamboo factories in Houaphanh. Three hot issueses were identified the solution should implement following discussion by whole participants mentioned such as: 1. Supplying bamboo culms to factory sufficiently as mentioned in 7.1 above; 2. Price should be fair for farmers; and 3. Quota exemption policy should be approved and implemented in order to provide incentive to investors. If three hottest issues cannot be solved properly, the tendency of closing factory openration is high and it will be negatively to develop bamboo sector in future.

## 8. SUGGESTIONS AND RECOMMENDATIONS

We could organize workshop like this in each three month and bring unsolvable isuues from this workshop in order to review why it cannot be solved properly or we may bring new hot issues for solving together. For the venue, it can be rotated from province, district, factory and farmer by assigning host for making friend and trust building.

## 9. LESSONS LEARNED

It is meaningful and useful workshop for every actor that never happen like this before, it brought problems and challenges putting on table and together solve base on same propose and benefit by discussing in enterained way and avoiding conflict to any damage ech other.

Done in XamNeua, Date 23 March 2012

Chairperson:

Sir MaiLeoi Phimmasone
D.H of Department of Planning & Investment

Reported by:

Somephone Heuangvongsa
DPI Policy Coordinator

Appendix 2.  Workshop agenda on March 20, 2012

| Date and time | Half-day program | Tools | Resource person |
|---|---|---|---|
| **8.00 – 8.30** | **Registration** | Registration sheets | Ms. Maikham |
| 8.30 – 8.45 | Introduction of objective and opening ceremony | Given speech | Vice-provincial governor |
| 8.45 – 9.15 | Presentation of bamboo factory status, constraints and proposed solutions | PowerPoint, LCD, Laptop | Mr. Somphone Heuangvongsa (DPI) |
| 9.15 – 9.45 | Presentation of bamboo factory production plan and factory voice | Saying something | Factory representative |
| 9.45 – 10.30 | Presentation of bamboo harvesting group's plan and farmer's voice | Saying something | Harvesting group leader |
| **10.30 – 10.45** | **Coffee break** | | |
| 10.45 – 11.00 | SNV concept on enterprise-oriented for paradigm shift of capacity development | Flipcharts and markers | Phet |
| 11.00 – 11.30 | Brainstorming and facilitating on bamboo supply intervention (verifying with whole audience )<br>- Identify pilot village for bamboo forest management<br>- Identify pilot village for harvesting formulation | Flipcharts, markers, paper tapes and meta-cards | Souvanpheng & Phet |
| 11.30 – 12.00 | Facilitating on quota system intervention and pushing at least one policy for supporting bamboo factory environment for this year<br>- Verify current quota system<br>- Raise up an important policy to be addressed | Flipcharts, markers, paper tapes and meta-cards | Souvanpheng & Phet |
| **12.00 – 13.30** | **Collective lunch and closing ceremony** | Given suggestion | Vice-provincial governor |
| 13.30 – 15.00 | Working with factory directors in SNV office | White board and markers | Souvanpheng & Phet |